ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ມ໐໑/ປພຖຊ/໐໙໐໙໑໐**

# ຖະແລງການ

## ສນັບສນຸນ ຄວາມສັມພັນ ລາວ-ສະຫະຣັດ.

ພວກເຮົາ ປະຊາຊົນພັກ ແລະ ກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ໄດ້ອອກຖະແລງການ ສບັບນີ້, ເພື່ອ ສນັບສນຸນ ຄວາມສັມພັນທາງການທູດ ລະຫວ່າງ ລາວ ກັບ ສະຫະຣັດ, ໄດ້ມີຄວາມກ້າວໜ້າຂຶ້ນ ຢ່າງເປັນປວັດການ; ດັ່ງທີ່ທ່ານ ທອງລຸນ ສີສຸລິດ ຣັຖມົນຕຣີຕ່າງປະເທດ ໄດ້ເນັ້ນໜັກເຖິງຄວາມສັມພັນ ອັນດີງາມນີ້ວ່າ "ປີນີ້ ກໍເປັນປີທີ່ 55 ທີ່ລາວ ກັບສະຫະຣັດ ໄດ້ສ້າງສາຍສັມພັນທາງການທູດລະຫວ່າງກັນ ຈຶ່ງຄິດວ່າເປັນໂອກາດດີ ທີ່ຈະໄດ້ສົ່ງເສີມ ແລະສ້າງສາຍພົວພັນ ທີ່ມີມູນເຊື້ອມາ ຕັ້ງ 55 ປີນັ້ນ, ໃຫ້ສືບຕໍ່ ມີໝາກຜົນ ແລະມີຄວາມຣັດແໜ້ນ ຫລາຍຂຶ້ນ. ພວກເຮົາ ເຄີຍໄດ້ຮັບຮູ້ ແລະ ສັລເສີນຜົນງານຂອງພັກຣັດມາແລ້ວຫລາຍສິ່ງຫລາຍຢ່າງ ທີ່ເປັນປໂຍດແກ່ປະເທດຊາດ". ອັນນີ້, ກໍເຊັ່ນດຽວ. -ການສືບຕໍ່ພົວພັນດີ ກັບສະຫະຣັດ. -ການມາຢ້ຽມຢາມ ສະຫະຣັດ ຂອງຜູ້ນຳຣະດັບສູງ ຂອງລາວແລະ-ການແລກປ່ຽນທູດທະຫານຕ່າງໆ ເຫລົ່ານີ້, ລ້ວນແລ້ວແຕ່ເປັນການເສັຽສລະ ກ້າຫານ ຂອງຄນະພັກຣັດ ຢ່າງໜ້າຍົກຍ້ອງສັລເສີນ...ເພາະ ມັນແມ່ນການປ່ຽນປີ້ນປວັດສາດ, ມັນເປັນການບອກໃຫ້ປະຊາຊົນ ຮັບຮູ້ຄືນໃໝ່ອີກວ່າ" ການທີ່ພັກຣັດ ໄດ້ກ່າວຫາ ສະຫະຣັດ ສາຣະພັດຢ່າງວ່າ ເປັນພວກຍັກ ພວກມານຕ່າງໆນາໆໃນເມື່ອກ່ອນນັ້ນ, ແມ່ນ ບໍ່ມີ ມູນຄວາມຈິງ!.. ເປັນພຽງການໂຄສະນາຊວນເຊື່ອເທົ້ານັ້ນເອງ!.

ເມື່ອພັກຣັດ ຍອມຮັບຮູ້ຄວາມຈິງໄດ້ດັ່ງນີ້, ກໍເປັນການຖືກຕ້ອງທີ່ສຸດແລ້ວ!. ຣັຖບານ ແລະ ປະຊາຊົນອະເມຣິກັນ ເປັນຄົນທີ່ສແວງຫາ ສິດທິເສຣີພາບ ປະຊາທິປະໄຕ ມາໂດຍກຳເນີດ, ເປັນຕົວຢ່າງ ອັນດີ ໃນການສ້າງສາພັທນາປະເທດ, ພັທນາຊັພຍາກອນມະນຸດ ແລະໃຫ້ໂອກາດ ແກ່ທຸກໆຄົນໄດ້ເຂົ້າເຖິງ.

ສະຫະຣັດ ໄດ້ເປັນເພື່ອນມິຕທີ່ດີ ກັບຊາດລາວ-ຄົນລາວ ມາເປັນເວລາດົນນານ ກ່ອນການສ້າງ ສາຍສັມພັນທາງການທູດອີກດ້ວຍ. ຫລັງຈາກສົງຄາມໂລກ ຄັ້ງທີ່ 2 ໄດ້ຢຸດຕິລົງ, ປະທານາທິບໍດີ ສະຫະຣັດ ທ່ານHarry Truman ກໍບໍ່ໄດ້ເຫັນດີນຳ ທີ່ຝຣັ່ງເສດ ກັບຄືນມາປົກຄອງລາວອີກຄັ້ງໃໝ່. -ການໂຮມລາວ ຄັ້ງທີ2 ກໍເຊັ່ນດຽວ. ປະທານາທິບໍດີສະຫະຣັດ ທ່ານ J. F. Kennedy ກໍເອົາທ່າທີການເມືອງ ຢ່າງຈະແຈ້ງທີ່ສຸດ! ກ່ຽວກັບລາວ ຄືທ່ານຕ້ອງການໃຫ້ລາວມີຄວາມເປັນເອກຣາດ ແລະປະຕິບັດນະໂຍບາຍເປັນກາງ. -ແມ່ນກະທັ່ງການໂຮມລາວຄັ້ງທີ 3 ສະຫະຣັດ ບໍ່ພຽງແຕ່ປະຕິບັດ ຕາມຂໍ້ຕົກລົງ ຢຸດຕິສົງຄາມ ກັບວຽດນາມເໜືອ ທີ່ເຊັນກັນ ຢູ່ Paris ປີ 1973 ຢ່າງຄົບຖ້ວນເທົ່ານັ້ນ, ທາງສະຖານທູດສະຫະຣັດຢູ່ລາວ ກໍຊຸກຍູ້ໃຫ້ຝ່າຍ ວຽງຈັນຍອມຜ່ອນຜັນທຸກຢ່າງ ໃຫ້ຝ່າຍປະເທດລາວ ເພື່ອໃຫ້ລາວ ໄດ້ທ້ອນໂຮມກັນ.

ເຖິງແມ່ນວ່າ ພັກຣັດ ໄດ້ມີການພົວພັນດີ ທາງການທູດ ຄືນໃໝ່ ເມື່ອບໍ່ດົນມານີ້ ກໍຕາມ... ແຕ່ ການ ຊ່ວຍເຫລືອ ແລະການຮ່ວມມືກັນ ກໍເປັນໜ້າຊື່ນຊົມຍິນດີ. ເປັນຕົ້ນ, ການຮ່ວມມືໃນດ້ານຊອກຫາ ສະເລີຍເສິກ ແລະຊາກສົບທະຫານອະເມຣິກັນ ທີ່ຫາຍສາບສູນໃນຍາມສົງຄາມ, ການເກັບກູ້ຣະເບີດ ທີ່ຍັງບໍ່ທັນແຕກ, ການລົບລ້າງປູກຝິ່ນ ຕ່າງໆເຫລົ່ານີ້ ກໍມີຄວາມກ້າວໜ້າດີ. ສ່ວນອັນທີ່ເດັ່ນ, ມີຄວາມໝາຍ **ປ່ຽນແປງປັວັດສາດ**ນັ້ນ, ກໍຄື ໃນທ້ອງເດືອນທັນວາ 2004, ປະທານາທິບໍດີສະຫະຣັດ ທ່ານ G. W. Bush ໄດ້ເຊັນກົດໝາຍການ ຄ້າປົກກະຕິກັບລາວ, ຈາກນັ້ນ, ການຄ້າລະຫວ່າງ ລາວກັບສະຫະຣັດ ກໍໄດ້ມີການເຕີບໂຕຂຶ້ນ ຢ່າງວ່ອງໄວ.ຕໍ່ມາ, ວັນທີ 13 ກໍຣະກະດາ 2009 ປະທານາທິບໍດີສະຫະຣັດ ທ່ານ Barack Obama ກໍໄດ້ປະກາດວ່າ "ລາວ ໄດ້ຢຸດເຊົາ ເປັນປະເທດ Marxist Lenninist ແລ້ວ" ພ້ອມທັງ ອະນຸຍາດ ໃຫ້ທະນາຄານການຄ້າ ຂາເຂົ້າ-ຂາອອກ ໄດ້ໃຫ້ເງິນກູ້ ແກ່ນັກລົງທຶນ ທີ່ຈະເຂົ້າມາທຳທຸຣະກິຈຢູ່ລາວ ແລະນຶ່ງປີຕໍ່ມາ, ຄື ໃນວັນທີ 13 ກໍຣະກະດາ 2010, ຜູ້ແທນລາວ ຣະດັບສູງ, ນຳໂດຍທ່ານ ທອງລຸນ ສີສຸຣິດ ຣັຖມົນຕຣີກະຊວງ ການຕ່າງປະທດ, ທັງເປັນຮອງນາຍົກຣັຖມົນຕຣີ ກໍໄດ້ຖືກເຊື້ອເຊີນ ມາຢ້ຽມຢາມສະຫະຣັດ ຢ່າງ ເປັນທາງການ ແລະໄດ້ຖືກຕ້ອນຮັບ ຈາກຣັຖມົນຕຣີຕ່າງປະເທດ ຍານາງ Hillary Clinton ຢ່າງອົບອຸ່ນເໝືອນກັນ.

ປະກົດການຕ່າງໆ ທີ່ກ່າວມາຂ້າງເທິງນີ້, ໄດ້ພິສຸດ ໃຫ້ເຫັນວ່າ ການສົ່ງຄວາມປາຖນາດີ ຂອງຣັຖມົນຕຣີຕ່າງປະເທດສະຫະຣັດ ຍານາງ Hillary Clinton ໃນນາມຂອງທ່ານ Barack Obama ແລະໃນນາມຂອງປະຊາຊົນ ອະເມຣິກັນ ເຖິງ ສປປລາວ. ພ້ອມທັງຢືນຢັນ ຄວາມໝາຍໝັ້ນ

ຕັ້ງໃຈ ຕໍ່ການພັທນາເມືອງລາວ ໃຫ້ມີສັນຕິສຸຂ ແລະມັ່ງຄັ້ງສົມບູນນັ້ນ, ມັນສອດຄ່ອງກັບ ຄວາມມຸ້ງມາດປາຖນາຂອງປະຊາຊົນລາວທັງໃນແລະນອກປະເທດເຫລືອທີ່ສຸດ!.

ດັ່ງນັ້ນ, ພວກເຮົາ ຈິ່ງຮຽກຮ້ອງ ມາຍັງພັກຣັດ ຈົ່ງໄດ້ຈິງໃຈ ຕອບສນອງ ກັບຄວາມໝາຍໝັ້ນ ຕັ້ງໃຈຂອງສະຫະຣັດ ທີ່ຢາກເປັນພາຄີ ຮ່ວມກັນເຮັດວຽກ ໃນບັນຫາ ທີ່ທັງສອງຝ່າຍ ມີຄວາມກ່ຽວພັນ ຮ່ວມກັນ, ໂດຍສະເພາະ ແມ່ນການເຄົາຣົບ ຕໍ່ສິດທິເສຣີພາບຂອງປະຊາຊົນນັ້ນເອງ. ພັກຣັດ ຕ້ອງອອກມາໂອ້ລົມກັບພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວ ທັງຊາດ ໂດຍໄວ... ເພື່ອພ້ອມກັນແກ້ໄຂ ບັນຫາຊາດ ທີ່ມີຢູ່ໃນປະຈຸບັນນີ້, ໃຫ້ສຳເຣັດລົງໄດ້ ຢ່າງຈົບງາມ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕຈົງອາດ ຊາດລາວຈົ່ງຈເຣີນ.
ຂໍຂອບໃຈ

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໐໙ ກັນຍາ ໒໐໑໐.**